ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ສະຖາບັນການທະນາຄານ

ເລກທີ: 83 /ສທຄ

ນະຄອນຫລວງວຽງຈັນ, ວັນທີ: 14 ຕຸລາ 2021

# ແຈ້ງການ

ເຖິງ: ນັກສອບເສັງ ຜູ້ທີ່ເສັງຕິດລາຍຊື່ສໍາຮອງ

ເລື່ອງ: ການໃຫ້ນັກສອບເສັງຜູ້ທີ່ຕິດລາຍຊື່ສໍາຮອງເຂົ້າມາສະເໜີຕົວ.

- ອີງຕາມແຜນແບ່ງປັນນັກສອບເສັງ - ພະນັກງານເຂົ້າຮຽນຕໍ່ ປະຈໍາສົກປີ 2021-2022 ສະບັບເລກທີ 816/ສສກ, ລົງວັນທີ 26/08/2021;
- ອີງຕາມການເຫັນດີຂອງກອງປະຊຸມຄະນະຮັບຜິດຊອບຊີ້ນໍາລວມການສອບເສັງຮັບນັກສຶກສາໃໝ່ ປະຈໍາສົກ 2021 - 2022 ຄັ້ງວັນທີ 21/09/2021.
- ອີງຕາມຜົນສອບເສັງຕົວຈິງຂອງນັກສອບເສັງ ຄັ້ງວັນທີ 02/10/2021 ແລະ 06/10/2021.

ສະຖາບັນການທະນາຄານ ຂໍແຈ້ງມາຍັງນັກສອບເສັງຜູ້ທີ່ເສັງຕິດໃນລາຍຊື່ສໍາຮອງໃຫ້ມາສະເໜີຕົວ ລາຍລະອຽດມີດັ່ງນີ້:

1. ໃຫ້ນັກສອບເສັງທີ່ເສັງຕິດສໍາຮອງເຂົ້າລົງທະບຽນສະເໜີຕົວປະໄວ້ຜ່ານທາງລະບົບອອນລາຍ ຕາມ Link ຫຼື QR code ທີ່ໃຫ້ມານີ້ ເລີ່ມແຕ່ວັນທີ 15-25/10/2021;
2. ສະຖາບັນການທະນາຄານ ຈະແຈ້ງຜົນການເລື່ອນລາຍຊື່ສໍາຮອງຂຶ້ນເປັນລາຍຊື່ສົມບູນໄປຕາມລໍາດັບ, ຕາມຈໍານວນຂອງຜູ້ທີ່ສອບເສັງໄດ້ແຕ່ບໍ່ມາລົງທະບຽນເຂົ້າຮຽນ ແລະ ສະເພາະຜູ້ທີ່ມາສະເໜີຕົວໄວ້ເທົ່ານັ້ນ; ໃນລະຫວ່າງວັນທີ 26-29/10/2021 ພ້ອມທັງລົງທະບຽນເຂົ້າຮຽນ;
3. ໃຫ້ນັກສອບເສັງຜູ້ທີ່ລົງທະບຽນປະຕິບັດຕາມຂັ້ນຕອນການລົງທະບຽນໃນລະບົບຢ່າງລະອຽດ ຫຼື ສາມາດສອບຖາມຂໍ້ມູນເພີ່ມຕື່ມ ໄດ້ທີ່ເບີ 020 57779774, 56895354, 020 22207771.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ ແລະ ປະຕິບັດຕາມແຈ້ງການສະບັບນີ້ຢ່າງເຂັ້ມງວດດ້ວຍ.

*Link ແລະ QR code ການລົງທະບຽນ*

https://cutt.ly/ORtdX5K

**ຫົວໜ້າສະຖາບັນການທະນາຄານ**

**ປອ.ອາຄົມ ປຣະເສີດ**